ຂ່າວ news
BOL.ODX
ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງ ອຸດົມໄຊ
Tel: 081 260009; 212549. Fax: 081 212551
Website: www.bol.gov.la/Oudomxay/

# ພິທີປະກາດການຈັດຕັ້ງ

## ຄະນະພະແນກ ຢູ່ ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ



ອີງຕາມ ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຂອງ ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໃຫ້ເຄື່ອນໄຫວຢ່າງມີປະສິດທິພາບສູງ. ສະນັ້ນ, ໃນຕອນເຊົ້າຂອງວັນທີ 25 ກັນຍາ 2020 ຈຶ່ງໄດ້ມີພິທີປະກາດການຈັດຕັ້ງຂຶ້ນ ໂດຍການເປັນປະທານຂອງ ທ່ານ ໂພຕະມີ ພຸດທະວົງ ອຳນວຍການຫົວໜ້າສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອແຂວງອຸດົມໄຊ, ໄດ້ມີພະນັກງານການນຳຂັ້ນຄະນະພະແນກ ແລະ ວິຊາການ ເຂົ້າຮ່ວມຢ່າງພ້ອມພຽງ, ພິທີດັ່ງກ່າວ ທ່ານ ແສງສະຫວັນ ມະນີເລີດ ຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງ ໄດ້ຜ່ານຂໍ້ຕົກລົງຂອງທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ວ່າດ້ວຍການແຕ່ງຕັ້ງ ຊັບຊ້ອນ ແລະ ຍົກຍ້າຍ ພະນັກງານການນຳຂັ້ນຄະນະພະແນກ ຈຳນວນ 06 ທ່ານ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ຊັບຊ້ອນ ແລະ ແຕ່ງຕັ້ງ ທ່ານ ສີສະເກດ ສີລາວົງສາ ທີ່ຮຽນຈົບທຶດສະດີຈາກໂຮງຮຽນການເມືອງ-ການປົກຄອງແຫ່ງຊາດ (ທ່າງ່ອນ) ເປັນຫົວໜ້າພະແນກຄຸ້ມຄອງທະນາຄານທຸລະກິດ;

2. ແຕ່ງຕັ້ງ ທ່ານ ທົງຄໍາ ກອງຊັບ ວ່າການຫົວໜ້າພະແນກບໍລິການ-ບັນຊີ ເປັນຫົວໜ້າພະແນກບໍລິການ-ບັນຊີ;

3. ຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ອານຸສັກ ພົງສະຫວັດ ຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງ ເປັນຮອງຫົວໜ້າພະແນກກວດກາ;

4. ຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ພອນສະຫວັນ ສຸພັດທອນ ຮອງຫົວໜ້າພະແນກເສດຖະກິດ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ເປັນຮອງຫົວໜ້າພະແນກຫ້ອງການ-ຈັດຕັ້ງພະນັກງານ;

5. ຍົກຍ້າຍ ແລະ ແຕ່ງຕັ້ງ ທ່ານ ເພັດສະໝອນ ພິລາສັກ ຮອງຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນຈຸລະພາກ ເປັນຮອງຫົວໜ້າພະແນກເສດຖະກິດ ແລະ ຄຸ້ມຄອງເງິນຕາຕ່າງປະເທດ;

6. ແຕ່ງຕັ້ງ ທ່ານ ນາງ ສຸພິນດາ ບຸນສະຫວັດ ພະນັກງານວິຊາການພະແນກກວດກາ ເປັນຮອງຫົວໜ້າພະແນກຄຸ້ມຄອງສະຖາບັນການເງິນຈຸລະພາກ.

ພາຍຫຼັງປະກາດການຈັດຕັ້ງ ໃນຕອນທ້າຍຂອງພິທີດັ່ງກ່າວ ທ່ານ ໂພຕະມີ ພຸດທະວົງ ວ່າການຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ ໄດ້ມີຄໍາເຫັນໂອ້ລົມພະນັກງານທັງໝົດ ເຊິ່ງການຊັບຊ້ອນຍົກຍ້າຍພະນັກງານແມ່ນວຽກງານປົກກະຕິຂອງອົງການຈັດຕັ້ງໃດໜຶ່ງ ເພື່ອໃຫ້ພະນັກງານໄດ້ຮຽນຮູ້ວຽກງານໄປຫຼາຍໆດ້ານ ເປັນການເກັບກ່ຽວປະສົບການໃໝ່ຕາມຄວາມເໝາະສົມຕົວຈິງໃນແຕ່ລະໄລຍະ, ໃຫ້ພະນັກງານທຸກທ່ານ ຈົ່ງມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງຄະນະພັກ-ຄະນະສາຂາ ຕັ້ງໜ້າປະຕິບັດວຽກງານວິຊາສະເພາະຕາມໜ້າທີ່ ແລະ ພາລະບົດບາດ ທີ່ການຈັດຕັ້ງໄດ້ມອບໝາຍໃຫ້ໄດ້ຮັບຜົນດີຕາມລະດັບຄາດໝາຍ ແລະ ໃຫ້ມີຜົນສໍາເລັດອັນໃໝ່ທີ່ຍິ່ງໃຫຍ່ກວ່າເກົ່າ.

**ພາບ: ສອນລະເກດ ພິລາສັກ**

**ຂ່າວ: ທົງຄໍາ ກອງຊັບ**